ກະຊວງຍຸຕິທຳແຫ່ງສະຫະຣັຖ
*ກົມສິດທິພົນລະເມືອງ*

ກະຊວງສຶກສາແຫ່ງສະຫະຣັຖ
*ຫ້ອງການສິດທິພົນລະເມືອງ*

# ການຮັບມືກັບການຮາວີໃນໂຮງຮຽນທີ່ກ່ຽວຂ້ອງກັບ COVID-19

## ແຫຼ່ງຂໍ້ມູນສຳລັບຄອບຄົວ

ການຮາວີ ຫຼື ການຈຳແນກເກີດຈາກອະຄະຕິ ແລະ ຄວາມຢ້ານກົວທີ່ເບິ່ງບໍ່ມີເຫດຜົນຕໍ່ໄວຣັສ ໂຄໂຣນາ (COVID-19) ມັນເປັນສິ່ງທີ່ຜິດ ແລະ ສາມາດນຳມາເຊິ່ງຜົນກະທົບທີ່ໂຫດຮ້າຍແຮງສຳລັບນັກຮຽນ ແລະ ຄອບຄົວຂອງພວກເຂົາ.

ໃນລະຫວ່າງການເກີດໂລກລະບາດ, ຂໍ້ມູນທີ່ຜິດ ແລະ ຄຳເວົ້າທີ່ເສຍຫາຍກ່ຽວກັບຊຸມຊົນຊາວອາເມຣິກາເຊື້ອສາຍເອເຊຍ ແລະ ຊາວເກາະປາຊີຟິກ (AAPI) ນຳໄປສູ່ການເພີ່ມຂຶ້ນຂອງການກະທຳທີ່ບໍ່ຍອມຮັບຄົນທີ່ແຕກຕ່າງກັບຕົນໄດ້ໃນທົ່ວປະເທດ-ນັບຕັ້ງແຕ່ການຮາວີດ້ວຍການໃຊ້ວາຈາໄປຈົນຮອດການໃຊ້ຄວາມຮຸນແຮງ. ໃນໂຮງຮຽນທົ່ວປະເທດ, ນັກຮຽນຈາກຊຸມຊົນ AAPI ໄດ້ລາຍງານການຖືກລັງແກ ແລະ ຮາວີຈາກໝູ່ໃນຫ້ອງຍ້ອນເຊື້ອຊາດ, ຊາດກຳເນີດ, ລວມທັງຊົນເຜົ່າ, ບັນພະຊົນ, ແລະ ພາສາຂອງພວກເຂົາ.

ໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມຂອງລັດລວມທັງວິທະຍະໄລ ແລະ ມະຫາວິທະຍາໄລເປັນຜູ້ຮັບຜິດຊອບໃນການສືບສວນ ແລະ ແກ້ໄຂການຈຳແນກ, ລວມທັງການຮາວີ, ການແນເປົ້າທຳຮ້າຍນັກຮຽນຍ້ອນ ຊົນຊາດ ຫຼື ຊາດກຳເນີດຂອງພວກເຂົາ. ເມື່ອໂຮງຮຽນບໍ່ສາມາດເອົາບາດກ້າວທີ່ເໝາະສົມ ໄດ້ພະແນກໂອກາດທາງການສຶກສາຈາກກົມສິດທິພົນລະເມືອງ(CRT) ແຫ່ງກະຊວງຍຸຕິທຳຂອງສະຫະຣັຖ ແລະ ຫ້ອງການສິດທິພົນລະເມືອງ(OCR) ແຫ່ງກະຊວງສຶກສາສາມາດຊ່ວຍໄດ້ໂດຍການນຳໃຊ້ກົດໝາຍລັດຖະບານກາງທີ່ຊ່ວຍປົກປ້ອງນັກຮຽນບໍ່ໃຫ້ຖືກການຈຳແນກ.

### ຕົວຢ່າງປະເພດເຫດການທີ່ CRT ແລະ OCR ສາມາດສືບສວນໄດ້:

ນັກຮຽນມັດທະຍົມຕົ້ນບັນທຶກວິດີໂອໂຕເອງທີ່ກຳລັງຮ້ອງ "ພວກແຜ່ໄວຣັສ" ໃສ່ໝູ່ໃນຫ້ອງທີ່ເປັນຄົນອາເມຣິກາເອເຊຍຕອນຢູ່ຫ້ອງຮຽນ ແລະ ເອົາວິດີໂອນັ້ນລົງສື່ອອນໄລນ໌. ຜູ້ບໍລິຫານໂຮງຮຽນຮູ້ກ່ຽວກັບວິດີໂອນັ້ນແຕ່ປະຕິເສດທີ່ຈະໃຫ້ມີການສອບສວນ ຫຼື ດຳເນີນການໃດໆທີ່ຈະປົກປ້ອງນັກຮຽນທີ່ເປັນຄົນອາເມຣິກາເຊື້ອສາຍເອເຊຍບໍ່ໃຫ້ຖືກຮາວີໃນອະນາຄົດ.

ນັກຮຽນທັດທະຍົມປາຍທີ່ບໍ່ໄດ້ລະບຸຊື່ໂພສໜ້າຈໍທີ່ມີການສົນທະນາກັນໃນລະຫວ່າງການຮຽນທາງໄກ ໂດຍເວົ້າວ່າໝູ່ໃນຫ້ອງຄົນອາເມຣິກາເຊື້ອສາຍເອເຊຍເຮັດໃຫ້ໂຮງຮຽນພັງ ແລະ ນຳເອົາ "ໄວຣັສຈີນ" ມາສູ່ຊຸມຊົນ. ຄູເຫັນການສົນທະນານັ້ນແຕ່ບໍ່ໄດ້ແກ້ໄຂບັນຫາການສະແດງຄວາມຄິດນັ້ນ ຫຼື ບໍ່ໄດ້ຈຳກັດການໂພສແບບບໍ່ລະບຸຊື່ນັ້ນ. ນັກຮຽນອາເມຣິກາເຊື້ອສາຍເອເຊຍປິດວິດີໂອນັ້ນເພື່ອບໍ່ໃຫ້ນັກຮຽນຄົນອື່ນເຫັນລາວ, ແຕ່ການສົນທະນານັ້ນຍັງຄົງສືບຕໍ່.

ເມື່ອກະກຽມທີ່ຈະກັບມາຮຽນໃນຫ້ອງຮຽນຄືເກົ່າ, ຄູໃຫຍ່ໂຮງຮຽນປະຖົມຖາມພໍ່ແມ່ນັກຮຽນທີ່ເປັນຄົນອາເມຣິກາເຊື້ອສາຍເອເຊຍກ່ຽວກັບການເດີນທາງໄປຈີນ, ຄວາມກ່ຽວເນື່ອງຂອງຄອບຄົວກັບເອເຊຍ, ແລະຂໍໃຫ້ມີຫຼັກຖານຢັ້ງຢືນວ່າມີຜົນກວດເຊື້ອ COVID-19 ເປັນລົບກ່ອນໃຫ້ນັກຮຽນລົງທະບຽນເຂົ້າຮຽນ. ທາງເມືອງບໍ່ໄດ້ຂໍຂໍ້ມູນເຫຼົ່ານີ້ຈາກນັກຮຽນທີ່ບໍ່ມີບັນພະຊົນເປັນຄົນເຊື້ອສາຍເອເຊຍ.

ໃນໂຮງຮຽນມັດທະຍົມຕົ້ນ, ນັກຮຽນຢູ່ໂຮງອາຫານໄດ້ສະແດງຄວາມເຫັນກ່ຽວກັບການໃສ່ໜ້າກາກອະນາໄມສອງຊັ້ນເວລາມີນັກຮຽນອາເມຣິກາເອເຊຍຢູ່ແຖວນັ້ນ. ພວກເຂົາຍັງເຮັດເວົ້າຮຽນແບບນັກຮຽນອາເມຣິກາເຊື້ອສາຍເອເຊຍທີ່ລົມກັນເປັນພາສາຂອງພວກເຂົາ, ໂດຍທີ່ມີຜູ້ໃຫຍ່ທີ່ຕິດຕາມການກິນອາຫານທ່ຽງເຫັນໝົດທຸກຢ່າງ. ເພື່ອຫຼີກລ່ຽງຂໍ້ຂັດແຍ່ງ, ນັກຮຽນອາເມຣິກາເຊື້ອສາຍເອເຊຍເລີ່ມທີ່ຈະໄດນັ່ງໂຕະກິນເຂົ້າຕ່າງຫາກ.

ພະນັກງານບໍລິຫານທີ່ພັກເຊົາໃນວິທະຍາໄລຄົນໜຶ່ງໄດ້ບອກນັກສຶກສາອາເມຣິກາເຊື້ອສາຍເອເຊຍ ໃຫ້ພິຈາລະນາການໄປພັກຢູ່ທີ່ພັກທີ່ຢູ່ນອກວິທະຍາເຂດ ແທນທີ່ຈະພັກໃນຫໍພັກຂອງວິທະຍາໄລ, ໂດຍອະທິບາຍວ່າ ນັກສຶກສາຜູ້ອື່ນອາດຮູ້ສຶກບໍ່ສະບາຍໃຈທີ່ຈະອາໃສໃນຫໍພັກຫ້ອງດຽວກັບນັກຮຽນອາເມຣິກາເຊື້ອສາຍເອເຊຍຈົນກວ່າທຸກຄົນໄດ້ຮັບວັກຊີນ.

**ກະຊວງຍຸຕິທຳແຫ່ງສະຫະລັດ**
*ກົມສິດທິພົນລະເມືອງ*

**ກະຊວງສຶກສາແຫ່ງສະຫະລັດ**
*ຫ້ອງການສິດທິພົນລະເມືອງ*

# ຈະເຮັດແນວໃດຖ້າຫາກນັກຮຽນປະສົບກັບ ການຈຳແນກໃນໂຮງຮຽນ?

ຖ້າຫາກທ່ານເຊື່ອວ່ານັກຮຽນໄດ້ຮັບການປະຕິບັດ ທີ່ບໍ່ຍຸຕິທຳ—ເຊັ່ນ, ຖືກປະຕິບັດ ແຕກຕ່າງຈາກຄົນອື່ນ, ຖືກຮາວີ, ຖືກລັງແກ, ຫຼື ຕອບໂຕ້—ຍ້ອນເຊື້ອຊາດ ຫຼື ຊາດກຳເນີດຂອງພວກເຂົາ, ມີຫຼາຍຢ່າງທີ່ທ່ານສາມາດເຮັດໄດ້:

1. **ແຈ້ງຕໍ່ຜູ້ນຳໂຮງຮຽນ** (ເຊັ່ນ, ຄູໃຫຍ່ ຫຼື ພະນັກງານຮັບຜິດຊອບວຽກງານນັກຮຽນ)ໃນທັນທີ. ຖ້າຫາກທ່ານບໍ່ໄດ້ຮັບການຊ່ວຍເຫຼືອທີ່ທ່ານຕ້ອງການ, ຍື່ນຄຳຮ້ອງຮຽນຢ່າງເປັນທາງການກັບໂຮງຮຽນ, ໂຮງຮຽນປະຈຳເມືອງ, ວິທະຍາໄລ, ຫຼື ມະຫາວິທະຍາໄລ. ບັນທຶກຄຳຕອບທີ່ທ່ານໄດ້ຮັບ.

2. **ຂຽນລາຍລະອຽດ** ກ່ຽວກັບສິ່ງທີ່ເກີດຂຶ້ນ, ເຫດການນັ້ນເກີດຂຶ້ນຢູ່ໃສ ແລະ ເມື່ອໃດ, ມີໃຜກ່ຽວຂ້ອງ, ແລະ ຊື່ຜູ້ເປັນພະຍານ. ເຮັດສິ່ງເຫຼົ່ານີ້ທຸກເຫດການການຈຳແນກ ແລະ ເຮັດສຳເນົາທຸກເອກະສານທີ່ກ່ຽວຂ້ອງ ຫຼື ຂໍ້ມູນອື່ນໆ.

3. ຂໍໃຫ້ໂຮງຮຽນ ຫຼື ວິທະຍາໄລ/ມະຫາວິທະຍາໄລ ແປເອກະສານ (ເຊັ່ນຟອມຮ້ອງຮຽນ) ແລະ ຂໍ້ຄວາມເປັນພາສາທີ່ທ່ານເຂົ້າໃຈໄດ້. **ຂໍໃຫ້ມີຜູ້ແປພາສາຖ້າທ່ານຕ້ອງການຄວາມຊ່ວຍເຫຼືອ** ລົມກັບພະນັກງານໃນໂຮງຮຽນໃນພາສາອື່ນທີ່ບໍ່ແມ່ນພາສາອັງກິດ.

4. ຖ້າຫາກໂຮງຮຽນ ຫຼື ວິທະຍາໄລ/ມະຫາວິທະຍາໄລບໍ່ດຳເນີນການເພື່ອແກ້ໄຂບັນຫາທີ່ທ່ານຮ້ອງຮຽນ ຫຼື ຍັງສືບຕໍ່ມີການຈຳແນກ, **ພິຈະລະນາ ຮ້ອງຮຽນ** ກັບກົມສິດທິພົນລະເມືອງຂອງກະຊວງຍຸຕິທຳແຫ່ງສະຫະລັດໄດ້ທີ່ civilrights.justice.gov, ຫຼື ກັບຫ້ອງການສິດທິພົນລະເມືອງຂອງກະຊວງສຶກສາແຫ່ງສະຫະລັດໄດ້ທີ່ https://www2.ed.gov/ocr/complaintintro.html (ເພື່ອຮ້ອງຮຽນເປັນພາສາອັງກິດ) ຫຼື ທີ່ https://www2.ed.gov/about/offices/list/ocr/docs/howto.html (ເພື່ອຮ້ອງຮຽນເປັນພາສາທີ່ບໍ່ແມ່ນພາສາອັງກິດ).

*"ບໍ່ມີໃຜໃນສະຫະລັດຄວນໃຊ້ຊີວິດໂດຍການຢ້ານກົວວ່າຈະຖືກເຮັດໃຫ້ເປັນເຫຍື່ອຍ້ອນພວກເຂົາເປັນໃຜບໍ່ມີໃຜໃນສະຫະລັດຄວນໃຊ້ຊີວິດຢູ່ກັບຄວາມຢ້ານກົວວ່າຈະຖືກເຮັດໃຫ້ເປັນຜູ້ໄດ້ຮັບເຄາະຮ້າຍຍ້ອນພວກເຂົາເປັນຜູ້ທີ່ເຂົາເຈົ້າເປັນຢູ່, ນັບຖືຫຍັງການສູດມົນ, ມາແຕ່ໃສບ່ອນທີ່ເຂົາເຈົ້າມາ, ຫຼື ຮັກໃຜຄົນທີ່ເຂົາເຈົ້າຮັກ. ຄວາມຫຼາກຫຼາຍແມ່ນສູນກາງທີ່ເຮັດໃຫ້ພວກເຮົາເປັນຊາດ, ແລະ ກະຊວງຍຸຕິທຳໃຫ້ຄຳໝັ້ນສັນຍາວ່າຈະດຳເນີນການຕໍ່ທຸກຄົນທີ່ລະເມີດສິດທິພົນລະເມືອງຂອງຜູ້ອື່ນ."*

**-Pamela Karlan, ຮອງຜູ້ຊ່ວຍລັດຖະມົນຕີຮັບຜິດຊອບດ້ານສິດທິພົນລະເມືອງ, ກະຊວງຍຸຕິທຳ**

*"ການຈຳແນກເຊື້ອຊາດ ແລະ ການກຽດຊັງຄົນຕ່າງຊາດບໍ່ຄວນມີໃນອາເມຣິກາ. ຄວາມຫຼາກຫຼາຍແມ່ນຈຸດແຂງຂອງຊາດເຮົາ, ແລະ ຫ້ອງການສິດທິພົນລະເມືອງຂອງກະຊວງສຶກສາໃຫ້ຄຳໝັ້ນສັນຍາວ່າຈະຕໍ່ສູ້ກັບການຈຳແນກ ແລະ ພວກເຮົາເຮັດວຽກເພື່ອອະນາຄົດທີ່ຍຸຕິທຳກວ່າເກົ່າເພື່ອນັກຮຽນຂອງຊາດເຮົາ."*

**-Suzanne B. Goldberg, ຮັກສາການຜູ້ຊ່ວຍລັດຖະມົນຕີຮັບຜິດຊອບດ້ານສິດທິພົນລະເມືອງ, ກະຊວງສຶກສາ**

